

# ກອງປະຊຸມປຶກສາຫາລື ກ່ຽວກັບແຜນຍຸດທະສາດການຮ່ວມມື ລະຫວ່າງ ລັດຖະບານ ສປປ ລາວ ແລະ ກຸ່ມທະນາຄານໂລກ (CPF) ປະຈຳສົກປີ 2022-2026

## ບົດລາຍງານຜົນສາ◌ໍເລັດ ແລະ ການຖອດຖອນບົດຮຽນ (CLR) ຂອງ CPF 2017-2021

9 ທັນວາ 2021

THE WORLD BANK
IBRD • IDA

# ບົດລາຍງານຜົນສຳເລັດ ແລະ ຖອດຖອນບົດຮຽນ (CLR): *ຮຽນຮູ້ຈາກປະສົບການທີ່ຜ່ານມາ*

**ຄວາມຮັບຜິດຊອບ**

- ເປັນເຄື່ອງມືເພື່ອຮັບປະກັນໃຫ້ມີຄວາມຮັບຜິດຊອບສູງ ໃນການເຮັດສຳເລັດຂອງຜົນໄດ້ຮັບ
- ການປະເມີນຕົນເອງ ກ່ຽວກັບຜົນໄດ້ຮັບຂອງ CPF ແລະ ການປະຕິບັດວຽກງານຂອງທະນາຄານໂລກ

**ການຮຽນຮູ້**

- ຖອດຖອນບົດຮຽນ ຈາກການຈັດຕັ້ງປະຕິບັດ CPF
- ບົດຮຽນທີ່ຖອດຖອນໄດ້ ສຳຄັນຕໍ່ການອອກແບບ CPF ໃໝ່

ການຄົ້ນຄ້ວາເອກະສານ, ການສົນທະນາກັບພະນັກງານ, ຊ່ຽວຊານ, ທີ່ປຶກສາ ແລະ ຜູ້ບໍລິຫານ ຄົນປະຈຸບັນ ແລະ ຜູ້ທີ່ເຄີຍເຮັດວຽກຢູ່ລາວ, ແລະ ການປຶກສາຫາລືກັບ ລັດຖະບານ ແລະ ຜູ້ມີສ່ວນຮ່ວມອື່ນໆ

# CPF 2017-2021 : ເປົ້າໝາຍຫຼັກ

*ສະໜັບສະໜູນການເຂົ້າເຖິງກາລະໂອກາດຢ່າງຖາວອນ ລວມທັງການເຕີບໂຕສີຂຽວທີ່ຍືນຍົງ, ການປັບປຸງການເຂົ້າເຖິງການບໍລິການດ້ານການພັດທະນາມະນຸດ ແລະ ພື້ນຖານໂຄງລ່າງ ແລະ ກາລະໂອກາດ ສໍາລັບທຸກຄົນ*

## ຂົງເຂດຈຸດສຸມທີ 1:
## ສະໜັບສະໜູນການເຕີບໂຕ ຢ່າງທົ່ວເຖິງ

**1.1** ຄວາມໝັ້ນຄົງ ດ້ານງົບປະມານ ແລະ ສະຖຽນລະພາບຂອງຂະແໜງການເງິນ

**1.2** ສ້າງສະພາບແວດລ້ອມທີ່ເອື້ອອໍານວຍແກ່ຜູ້ລົງທຶນ

**1.3** ລົງທຶນໃສ່ພື້ນຖານໂຄງລ່າງເພື່ອການເຕີບໂຕ ແລະ ຄວາມສົມດູນ

## ຂົງເຂດຈຸດສຸມທີ 2:
## ລົງທຶນໃສ່ການພັດທະນາມະນຸດ

**2.1** ຫຼຸດຜ່ອນອັດຕາການຂາດສານອາຫານ

**2.2** ປັບປຸງຄຸນນະພາບຂອງການສຶກສາຂັ້ນປະຖົມ ແລະ ອະນຸບານ ແລະ ສ້າງຄວາມຈູງໃຈ ໃຫ້ເດັກຍິງມາໂຮງຮຽນ

**2.3** ປັບປຸງການເຂົ້າເຖິງ ການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບ

## ຂົງເຂດຈຸດສຸມທີ 3:
## ປົກປັກຮັກສາສິ່ງແວດລ້ອມ

**3.1** ສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທໍາມະຊາດຢ່າງຍືນຍົງ

**3.2.** ຄວາມສາມາດໃນການຮັບມືແລະ ຟື້ນຕົວຄືນຈາກໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ

**ຈຸດສົມທີ່ກ່ຽວພັນກັບຫຼາຍຂະແໜງການ: ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ແລະ ລະບົບ ເພື່ອປັບປຸງການຈັດຕັ້ງປະຕິບັດນະໂຍບາຍ**

# ຄວາມຄືບໜ້າ ຂອງຜົນສຳເລັດໃນການບັນລຸເປົ້າໝາຍການພັດທະນາ ຂອງ CPF

8 ຈຸດປະສົ່ງ ແລະ 1 ບັນຫາປົ່ນອ້ອມຫຼາຍຂະແໜງການ:

✓ 1 ໄດ້ຮັບຜົນສຳເລັດ

➢ 4 ສ່ວນຫຼາຍແມ່ນໄດ້ຮັບຜົນສຳເລັດ

➢ 4 ບາງສ່ວນທີ່ໄດ້ຮັບຜົນສຳເລັດ

ໂດຍລວມເຫັນວ່າ -> "ບໍ່ເປັນທີ່ໜ້າພໍໃຈ ລະດັບປານກາງ ຫຼື moderately unsatisfactory" ສຳລັບເປົ້າໝາຍຂອງການພັດທະນາຂອງ CPF

# ບົດຮຽນທີ່ສຳຄັນທີ່ຖອດຖອນໄດ້

## ບົດຮຽນທີ 1:

## *ເປົ້າໝາຍຄວນ ຄຳນຶງເຖິງ ໄລຍະເວລາທີ່ຍາວອອກ ໃນຂະນະທີ່ສືບຕໍ່ການເສີມສ້າງຄວາມເຂັ້ມແຂງ ໃນການຈັດຕັ້ງປະຕິບັດ ແລະ ຄວາມອາດສາມາດ*

***ຄວາມຫຼ້າຊ້າໃນການບັນລຸເປົ້າໝາຍ ຍອ້ນການເລີ່ມຈັດຕັ້ງປະຕິບັດທີ່ມີຈັງຫວະທີ່ຊ້າ ບໍ່ແມ່ນຍ້ອນ ການປ່ຽນແປງ ຂອງນະໂຍບາຍ. ການເລີ່ມຈັດຕັ້ງປະຕິບັດມີຄວາມຊັກຊ້າກວ່າທີ່ຄາດການໄວ້ຫຼາຍ.***

***ສະນັ້ນ…***

- ✓ ຜົນສຳເລັດ ສ່ວນຫຼາຍແມ່ນໃຊ້ໄລຍະເວລາ ຍາວກວ່າທີ່ຄິດ
- ✓ ເປົ້າໝາຍທີ່ວາງອອກຄວນແນ່ໃສ່ ຄວາມເປັນຈິງນີ້
- ✓ ການຕີລາຄາ ການຈັດຕັ້ງປະຕິບັດ ຕ້ອງມີຄວາມກົງໄປກົງມາ ຫຼາຍກວ່າເກົ່າ
- ✓ ສືບຕໍ່ສ້າງຄວາມອາດສາມາດ ແລະ ເພີ່ມທະວີໃຫ້ຫຼາຍຂຶ້ນກວ່າເກົ່າ ໃນບາງຂົງເຂດ
- ✓ ສຸມໃສ່ການສ້າງຄວາມຄວາມອາດສາມາດໃນການຈັດຕັ້ງປະຕິບັດ ວຽກງານຍຸດທະສາດທີ່ເປັນບູລິມະສິດ

# ບົດຮຽນທີ 2:

## *ການຈັດຕັ້ງປະຕິບັດມີຄວາມທ້າທາຍຫຼາຍຂຶ້ນ ເມື່ອກິດຈະກໍາກ່ຽວພັນກັບຫຼາຍຂະແໜງການ ແລະ ການຈັດຕັ້ງປະຕິບັດ ທີ່ອີງໃສ່ທ້ອງຖິ່ນເປັນຫຼັກ*

*ໂຄງການທີ່ ຕັ້ງຄາດໝາຍໄວ້ສູງ ແລະ ສະຫຼັບຊັບຊ້ອນ ເຮັດໃຫ້ການຈັດຕັ້ງປະຕິບັດມີຄວາມສັບສົນ ແລະ ມີຜົນກະທົບໃຫຍ່ຫຼວງຕໍ່ ຂອບເວລາຂອງ ໂຄງການ.*

*ສະນັ້ນ...*

- ✓ ສຸມໃສ່ ໂຄງການທີ່ ບໍ່ມີຄວາມຊັບຊ້ອນຫຼາຍ
- ✓ ຄັດເລືອກ ໂຄງການທີ່ກ່ຽວພັນກັບຫຼາຍຂະແໜງທີ່ເປັນບູລິມະສິດ ແລະ ຍຸດທະສາດ ຕໍ່ການແກ້ໄຂສິ່ງທ້າທາຍດ້ານການພັດທະນາ
- ✓ ແນ່ໃສ່ບັນດາວຽກງານທີ່ "ເໝາະສົມກັບຈຸດປະສົງ" ບົນພື້ນຖານ ການວິໃຈ ແລະ ການວິເຄາະດ້ານເສດຖະສາດການເມືອງທີ່ໜັກແໜ້ນ
- ✓ ຫັນໄປສູ່ການຮິບໂຮມໂຄງການ: ໂຄງການທີ່ມີປະສິດທິຜົນ → ຂະຫຍາຍໂຄງການ, ຈໍານວນໂຄງການໜ້ອຍລົງ ເນັ້ນໃສ່ໂຄງການທີ່ມີການລົງທຶນຫຼາຍຂຶ້ນ

# ບົດຮຽນທີ 3:

## *ໃນຂົງເຂດທີ່ ມີຄວາມລະອຽດອ່ອນ ຕ້ອງໄດ້ຄຳນຶງເຖິງຄວາມເປັນຈິງຂອງເສດຖະສາດການເມືອງ ແລະ ນຳໃຊ້ແບບແຜນວິທີການ ທີ່ເປັນໄລຍະຍາວ*

*ການລິເລີ່ມ ຫຼື ກັບໄປພົວພັນ/ຮ່ວມມືດ້ານ ການປະຕິບັດງານໃນຂົງເຂດທີ່ມີຄວາມລະອຽດອ່ອນ (ເຊັ່ນ: ບັນຫາໜີ້ສິນສາທາລະນະ, ລັດວິສະຫະກິດ, ພະລັງງານ) ທີ່ ໃຊ້ເວລາ, ສ້າງຄວາມໄວ້ເນື້ອເຊື່ອໃຈ, ແລະ ການຕອບສະໜອງຕໍ່ ຄວາມເປັນຈິງ ດ້ານເສດຖະສາດການເມືອງ.*

*ສະນັ້ນ...*

- ✓ ຮັບຮູ້ເຖິງບັນຫາທີ່ມີຄວາມລະອຽດອ່ອນ ຂອງລັດຖະບານ ແລະ ຕັ້ງຄວາມຄາດຫວັງທີ່ ເໝາະສົມກັບຄວາມເປັນຈິງເພື່ອການປຶກສາຫາລື ດ້ານນະໂຍບາຍ
- ✓ ເລືອກໃຊ້ຄວາມຊຳນິຊຳນານຂອງ WB ເພື່ອຊຸກຍູ້ ໃຫ້ມີການ ປຶກສາຫາລືກ່ຽວກັບ ບັນຫາໃນລະດັບວິຊາການ ແລະ ລະດັບຜູ້ບໍລິຫານ ທີ່ມີຄວາມເຫັນທີ່ແຕກຕ່າງ ຈາກຜູ້ມີສ່ວນຮ່ວມຫຼັກ
- ✓ ເລືອກປະຕິບັດວິທີການໄລຍະກາງເພື່ອຫາຊ່ອງທາງເຂົ້າເຖິງ ທີ່ເປັນໄປໄດ້

# ບົດຮຽນທີ 4:

## *ຂໍ້ມູນ ແລະ ການປະເມີນຜົນກະທົບ*

*ມີຄວາມຫຍຸ້ງຍາກຫຼາຍ ແລະ ຖ້າທາຍຫຼາຍ ໃນດ້ານຂໍ້ມູນ (ຂໍ້ມູນທີ່ມີ, ການເຂົ້າເຖິງຂໍ້ມູນ, ຄຸນນະພາບຂໍ້ມູນ) ເຊິ່ງມີຜົນກະທົບຢ່າງໜັກຕໍ່ ຄວາມອາດສາມາດຂອງລັດຖະບານໂດຍລວມ ແລະ ການອອກແບບ ກໍຄືການຈັດຕັ້ງປະຕິບັດແຜນງານຂອງ WB.*

***ສະນັ້ນ...***

- ✓ ລົງທຶນໃນລະບົບສະຖິຕິຂອງລັດ ແລະ ການຫັນສະຖາບັນໃຫ້ເປັນທັນສະໄໝ
- ✓ ຮັບປະກັນ ໃຫ້ມີການປະເມີນແຜນງານ ແລະ ໂຄງການຢ່າງເຫດເໝາະ ແລະ ພຽງພໍ → ການປະເມີນຂໍ້ມູນພື້ນຖານ ແລະ ຜົນກະທົບ ເພື່ອຊ່ວຍໃນການອອກແບບໂຄງການ-ແຜນງານ ແລະ ການດັດປັບຕ່າງໆ

# ບົດຮຽນ ທີ 5:

## *ຄວາມເປັນຈິງຂອງ ຂອບຜົນໄດ້ຮັບ*

*ຄວາມທ້າທາຍໃນການເຊື່ອມຕໍ່ ຈຸດປະສົງລະດັບສູງ ກັບວຽກງານ/ໂຄງການ/ແຜນງານ/ການສະໜອງທຶນຂອງ WB ຮຽກຮ້ອງການພັດທະນາຈຸດປະສົງ, ຕົວຊີ້ວັດ ແລະ ຄາດໝາຍຂອງ CPF ຢ່າງລະອຽດຖີ່ຖ້ວນ.*

*ສະນັ້ນ...*

- ✓ ພັດທະນາ ຂອບຜົນໄດ້ຮັບ (result framework) ທີ່ ມີການເຊື່ອມໂຍງ ກັນຢ່າງຈະແຈ້ງລະຫວ່າງ ຈຸດປະສົງລະດັບສູງ, ໂຄງການ WB ແລະ ຕົວຊີ້ວັດຂອງ CPF
- ✓ ຫຼີກເວັ້ນຄວາມບໍ່ ສອດຄ່ອງກັນລະຫວ່າງ ລະດັບຄວາມຄາດຫວັງຂອງຈຸດປະສົງ ແລະ ຄວາມເປັນຈິງຂອງໂຄງການ

| CPF Objectives | Overall Outcome Rating | Indicators Achieved | Indicators Mostly Achieved | Indicators Partially Achieved | Indicators Not Achieved |
|---|---|---|---|---|---|
| **Objective 2.3**: Improving access to and quality of maternal and child health services | **Mostly Achieved** | 3 | 1 | — | — |
| **Focus Area 3: Protecting the Environment** | | | | | |
| **Objective 3.1**: Promoting protection of the environment and responsible management of natural resources | **Mostly Achieved** | 2 | — | 2 | — |
| **Objective 3.2**: Enhancing disaster risk management and climate and disaster resilience | **Partially Achieved** | — | 1 | 2 | — |
| **Cross-Cutting Theme** | | | | | |
| Strengthening Institutions and Systems for Improved Policy Implementation | **Mostly Achieved** | 2 | 3 | - | — |
| **Overall CPF Achievements** | **Moderately Unsatisfactory** | **16** | **10** | **9** | **1** |